## ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 21 ຕຸລາ 2007 ( 10-21-2007 )

---

## <u>ບັນຫາຂອງຫົວໃຈ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ມັດທາຍ 5:21-32)
**<u>ຄຳຖາມແຫ່ງຊີວິດ:</u>** ຊຶ່ງຂ້າພະເຈົ້າບໍ່ໄດ້ເຮັດຜິດມາເປັນເວລາດົນນານແລ້ວນັ້ນແມ່ນຢູ່ບໍ່?
**<u>ຄວາມຈິງໃນພຣະຄັມພີ:</u>** ຫົວໃຈນີ່ງມີທັງຄວາມຊອບທັມແລະບັນຫາຊຶ່ງເປັນການຍາກໃນການດັດແປງ.
**<u>ຜົນສະທ້ອນຕໍ່ຊີວິດ:</u>** ບົດຮຽນນີ້ໄດ້ຂຽນຂື້ນມາເພື່ອຊ່ອຍໃຫ້ທ່ານຕິດຕາພຣະເຢຊູ ແລະດຳຣົງຊີວິດຕາມຄຳສັ່ງສອນຂອງພຣະອົງໂດຍ:

- ການຍອມຮັບວ່າໃນຫົວໃຈຂອງທ່ານມີຄວາມຜິດບາບແອບແຝງຢູ່ໃນ ແລະ
- ການຕັດສິນໃຈເອົາຊີວິດຂອງທ່ານອອກຈາກບາບໃຫ້ໄວ ແລະເດັດຂາດກັບມັນ.

### ການຈັດຕຽມຂອງຄຣູ

1. ອະທິຖານຂໍການຊົງນຳຈາກອົງພຣະວິນຍານບໍຣິສຸດ ກ່ອນເລີ້ມສຶກສາພຣະຄັມພີແລະບົດຮຽນ
2. ສຶກສາຂໍ້ພຣະຄັມພີທີ່ໃຊ້ໃນບົດຮຽນນີ້ ດ້ວຍການຕຶກຕອງ, ພິຈາຣະນາ
3. ສຶກສາບົດຮຽນຂອງນັກຮຽນ ເພື່ອຈະໄດ້ເຂົ້າໃຈແຈ້ງໃນບົດຮຽນທີ່ຈະນຳໄປສອນ
4. ອ່ານ "**<u>ແຜນການສອນ</u>**", ຫມາຍບ່ອນສຳຄັນໄວ້, ປັບປຸງ, ແກ້ໄຂ, ຖ້າມີເຣື່ອງປະກອບຫລືຕົວຢ່າງກໍຈົດບັນທຶກໄວ້
5. ເຮັດກອບປີ້(ສຳເນົາ) ບົດຮຽນຂອງນັກຮຽນ ໃຫ້ພຽງພໍກັບຈຳນວນນັກຮຽນ

### ແຜນການສອນ

1. ແຈກຢາຍບົດຮຽນຂອງນັກຮຽນ ໃຫ້ນັກຮຽນທຸກຄົນ
2. ສຳຣວດຈຳນວນນັກຮຽນ ຖາມຂ່າວຫາຜູ້ຂາດເພື່ອຈະໄດ້ສົ່ງຂ່າວຫາແລະອະທິຖານເພື່ອ
3. ຖາມນັກຮຽນວ່າເຂົາເຈົ້າໄດ້ຮຽນເຣື່ອງຫຍັງໃນວັນທິດທີ່ຜ່ານມາ ເພື່ອລື້ມຄືນຄວາມຊົງຈຳ
4. ໃຫ້ນັກຮຽນຄົນນື່ງແບ່ງປັນ 2-3 ນາທີ ຈາກປະສົບການຊີວິດກັບພຣະເຈົ້າໃນອາທິດທີ່ຜ່ານມາ, ຄຳພຍານສັ້ນໆ
5. ອະທິຖານເປີດຫ້ອງຮຽນ, ເພື່ອການຮຽນແລະຜູ້ຂາດການຮຽນມື້ນີ້ ແລະເລີ້ມຕົ້ນໃນການສອນ

**<u>ແນະນຳ:</u>** - ຈັດຕຽມໜັງສືພິມໄວ້ສຳລັບນັກຮຽນ ໃນເມື່ອນັກຮຽນມາຮອດຫ້ອງຮຽນໃຫ້ຢາຍໜັງສືພິມໃຫ້ແລ້ວໃຫ້ເຂົາເຈົ້າຊອກເອົາຕົວຢ່າງການເຮັດຜິດ ແລະຜົນທີ່ຕາມມາໃນສັງຄົມທຸກວັນນີ້. ໃຫ້ນັກຮຽນເອົາຕົວຢ່າງທີ່ໄດ້ມາແບ່ງປັນຊີ້ເຫດຜົນໃຫ້ຊຶ່ງກັນ ແລະກັນຟັງ. ມີບາງຄັ້ງທີ່ຜູ້ໃຫຍ່ຂອງເຮົາໄດ້ປຽບທຽບສິ່ງທີ່ເຂົາໄດ້ເຮັດໃສ່ກັບການກະທຳຂອງກັນ ແລະຕັດສິນການປຽບທຽບວ່າສິ່ງທີ່ເຂົາເຮັດນັ້ນຖືກຕ້ອງເປັນທັມ. ບົດຮຽນນີ້ໄດ້ຕໍ່ເນື່ອງມາຈາກບົດຮຽນອາທິດແລ້ວນີ້ ທີ່ກ່າວເຖິງການປະພຶດຂອງພວກນັກທັມ ແລະຟາຣີຊາຍ (ມັດທາຍ 5:20).

### 1. <u>ໃຫ້ຮູ້ຈັກໃຈທ່ານເອງ</u> : ( ມັດທາຍ 5:21-26)

1) ຂໍໃຫ້ນັກຮຽນອາສາສມັກອ່ານ ມັດທາຍ 5:21-26

2) **ແນະນຳ**: ໃຫ້ນັກຮຽນຊອກຢູ່ໃນ ພຣະທັມມັດທາຍບົດທີ 5:21-26 ວ່າບັນຍັດເກົ່າແກ່ດັ້ງເດີມວ່າຢ່າງໃດກ່ຽວກັບຜູ້ຂ້າຄົນ.

3) **ຖາມນັກຮຽນວ່າ:** (1). ບັນຍັດທີ່ກ່າວໄວ້ໃນຂໍ້ທີ 21 ປຽບທຽບໃສ່ກັບການສັ່ງສອນຂອງພຣະເຢຊູກ່ຽວກັບຜູ້ຂ້າຄົນນັ້ນໄດ້ຢ່າງໃດ?

(2). ທ່ານສາມາດແບ່ງແຍກລະຫວ່າງຜູ້ຊອບທັມຄຽດຮ້າຍ ກັບຜູ້ຢູ່ໃນຄວາມບາບຄຽດຮ້າຍນັ້ນມີຄວາມແຕກຕ່າງກັນແນວໃດ?

(3). ທ່ານຄວນຈະທຳຢ່າງໃດໃຫ້ປອງດອງກັບເພື່ອນຄຣິສຕຽນຜູ້ທີ່ທຳຜິດຕໍ່ທ່ານ?

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** ມັດທາຍ 5:21-26

1. ບັນຍັດທີ່ຫ້າມໄວ້ວ່າ ຢ່າຂ້າຄົນ ປຽບທຽບໃສ່ກັບການສິດສອນຂອງພຣະເຢຊູວ່າຢ່າງໃດ?
2. ຂໍ້ພຣະຄຳເຫລົ່ານີ້ໄດ້ຊີ້ໃຫ້ເຫັນເປັນລັກສະນະຢ່າງໃດ?
3. ລັກສະນະທ່າທີການກະທຳຢ່າງນີ້ມີອິດທິພົນດຶງດູດແນວໃດ?
4. ແມ່ນຫຍັງທີ່ເປັນອຸປສັກກີດຂວາງໃນການປອງດອງກັນ?
5. ພຣະຄຣິດໄດ້ຊ່ວຍຊ່ອຍໃຫ້ກັບຄືນດີກັນແນວໃດ?
6. ໂລກຂອງພວກເຮົາຈະເປັນຢ່າງໃດຖ້າຫາກທຸກຄົນປະຕິບັດຕາມຄຳແນະນຳຂອງພຣະເຢຊູໃນເຣື່ອງຄວາມຖືກຕ້ອງປອງດອງກັນ?

## 2. <u>ເຝົ້າຣະວັງໃຈຂອງທ່ານ:</u> (ມັດທາຍ 5:27-30)

1) ຂໍໃຫ້ອາສາສມັກອ່ານພຣະທັມ ມັດທາຍ 5:27-30

2) **ອະທິບາຍ:** ການສັ່ງສອນຂອງພຣະເຢຊູໄດ້ແນະນຳເຣື່ອງການຫລິ້ນຊູ້ທັງລັກສະນະທ່າທາງຂອງຈິດໃຈແລະເນັ້ນໃສ່ຜູ້ທີ່ຕິດຕາມພຣະອົງໃຫ້ພຍາຍາມເຝົ້າຣະວັງຫົວໃຈໄວ້ບໍ່ໃຫ້ຄິດຫລືກະທຳຜິດບາບ. ນຳພານັກຮຽນເຂົ້າສຶກສາພຣະທັມມັດທາຍ 5:27-28.

3) **ຄຳຖາມ:** (1) ເປັນດ້ວຍເຫດໃດພຣະເຢຊູຈຶ່ງເວົ້າວ່າ: ຫົວໃຈຊັກຈູງໃຫ້ເກີດການກະທຳຂຶ້ນ?

(2) ທ່ານຈະຫລີກລ້ຽງການກັບຄືນສູ່ຕັນຫາທາງເພດສັມພັນໄດ້ແນວໃດ?

4) ອ່ານມັດທາຍ 5:29-30 ແລ້ວສລຸບຄວາມໃນຂໍ້ຄວາມ "ສິ່ງທີ່ນຳພາທ່ານໃຫ້ເຮັດຜິດບາບ" ຊີ້ບອກຈຸດທີ່ນຳໄປສູ່ການກະທຳທີ່ຮ້າຍແຮງ ແລະເກີນຂອບເຂດທີ່ເຮົາຈະຕ້ອງຣະວັງ , (ຈິດໃຈ)

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** (ມັດທາຍ 5:27-30)

1. ພຣະເຢຊູໄດ້ຊີ້ງຕີຄວາມໝາຍເຣື່ອງການຫລິ້ນຊູ້ປຽບທຽບໃສ່ກັບການຫ້າມເຣື່ອງການຫລິ້ນຊູ້ໃນພຣະຄັມພີເດີມຢ່າງໃດ? (ຂໍ້ 27)
2. ເປັນຫຍັງຫົວໃຈດວງດຽວພາໃຫ້ເຮັດຫລາຍແນວໄດ້?
3. ຈະຕ້ອງທຳແບບໃດທີ່ພຣະເຢຊູແນະນຳເພື່ອໃຫ້ຫລີກເວັ້ນຈາກຣາຄະຕັນຫາທາງເພດສັມພັນ, ຄວາມສົກກະປົກ ຫລື ຄວາມບາບໄດ້?
4. ທິດທາງຂອງສັງຄົມທຸກມື້ນີ້ມີຫຍັງແດ່ທີ່ຊັກຈູງເຂົ້າໄປສູ່ການຫລອກລວງໃນທາງເພດສັມພັນແລະສິ່ງຊົ່ວຮ້າຍສົກກະປົກ?
5. ຄຣິສຕຽນຄວນປົກປ້ອງຕົວເຂົາເອງ ແລະຄອບຄົວຂອງເຂົາໃຫ້ເອົາຊະນະຕໍ່ອຳນາດການດຶງດູດຂອງສິ່ງເຫລົ່ານີ້ໄດ້?

**3. ຈົ່ງພິຈາລະນາເບິ່ງການກະທຳຂອງທ່ານ:** (ມັດທາຍ 5:30-32)

ໃນຂນະທ່ານສອນບົດຮຽນນີ້ຢູ່ ໃຫ້ຈົດຈຳວ່າການຢ່າຮ້າງ ແລະການແຕ່ງງານທັງສອງເຣື່ອງນີ້ຈະເກີດມີການຂັດແຍ້ງ ຫລືຖົກຖຽງກັນ, ມີສ່ວນປະກອບ ແລະອາລົມຄວາມຮູ້ສຶກ. ສຳຄັນຕ້ອງໄວກ່ອນຄວາມຮູ້ສຶກຕໍ່ສິ່ງເຫລົ່ານັ້ນ, ໃນຫ້ອງຮຽນຂອງທ່ານອາດຈະມີຜູ້ໄດ້ຜ່ານປະສົບການຢ່າງນີ້ມາແລ້ວ.

1) ຂໍໃຫ້ນັກຮຽນອາສາສມັກອ່ານພຣະທັມ ມັດທາຍ 5:30-32
2) **ແນະນຳ**: ຂໍໃຫ້ນັກຮຽນຊອກຫາຂໍ້ຄວາມທີ່ວ່າ **ການຫລົ້ນຊູ້** ຢູ່ໃນພຣະທັມມັດທາຍ 5:31-32 ວ່າໃນກົດບັນຍັດເກົ່າແກ່ໂບຮານກ່າວເຣື່ອງການຫລົ້ນຊູ້ນີ້ວ່າແນວໃດ.
3) ຖາມນວ່າ: ພຣະບັນຍັດນີ້ປຽບທຽບກັບການສອນຂອງພຣະເຢຊູວ່າແນວໃດ?
4) ພຣະເຢຊູກ່າວໄວ້ວ່າ ການຢ່າຮ້າງ ແລະການແຕ່ງງານອີກ ສິ່ງນີ້ຄວນພິຈາຣະນາວ່າເຮົາຄວນຫລືບໍ່ຄວນ. ໜ້າທີ່ຂອງພວກເຮົາຜູ້ທີ່ເຊື່ອມີແຕ່ດຳເນີນການບອກສອນຄົນອື່ນບໍ່ໃຫ້ມີເຣື່ອງນີ້ເກີດຂື້ນ, ແຕ່ເຮົາກໍຄວນຮັບຮູ້ການກະທຳຂອງເຮົາ ແລະຍອມຮັບເຫດຜົນຄົນອື່ນທີ່ຕັກເຕືອນເຮົາດ້ວຍ.
5) ເພື່ອສະທ້ອນໃຫ້ເຫັນເວລາທີ່ຜ່ານມາກ່ຽວກັບການຕົກລົງກັນດ້ວຍກິຣິຍາໃນທາງລົບ ແລະນຳມາພິຈາຣະນາ ຖ້າຫາກເຂົາຍັງເຮັດຄືເກົ່າຢູ່ກໍຢ່າເປັນປໍຣະປັກກັບຄົນໃດຄົນນຶ່ງ. ເລົ້າໂລມໃຈເຂົາໃຫ້ຊອກສແວງຫາການອະພັຍຈາກພຣະເຢຊູຄຣິດເໝືອນກັບຄົນອື່ນ ໆ.

**ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະທັມ:** 5:31-32

1. ພຣະເຢຊູໄດ້ຊີ້ງອະທິບາຍພຣະບັນຍັດໃນພຣະຄັມພີເດີມໃນເຣື່ອງການຫລົ້ນຊູ້ອອກມາຢ່າງໃດ?
2. ໃນບົດຮຽນນີ້ໄດ້ສະແດງໃຫ້ພວກເຮົາເຫັນໃນທາງທີ່ພວກເຮົາກະທຳ ແລະມີຜົນຕໍ່ຄົນອື່ນແນວໃດ?
3. ຄວາມບາບໄດ້ສວມໜ້າກາກຢ່າງໃດໃສ່ໃນຫົວໃຈ?
4. ຖ້າທ່ານມີຄວາມພຍາຍາມທຳໃຫ້ຄົນອື່ນເຂົ້າໃຈໃນເຣື່ອງນີ້, ທ່ານຈະວາງທ່າທີແນວໃດໃນອາທິດນີ້.

## ບົດຮຽນພຣະຄັມພີແຫ່ງຄວາມຈິງ:

- ຄົນທີ່ຊອບທັມອັນແທ້ຈິງຕ້ອງເຂົ້າໃຈວ່າບາບມີຢູ່ໃນໃຈ.
- ຄົນທີ່ຊອບທັມອັນແທ້ຈິງຕ້ອງປົກປ້ອງຄຸ້ມຄອງໃຈຂອງຕົນໄດ້ ຊຶ່ງຈະສະແດງອອກຢູ່ທີ່ການກະທຳຂອງເຂົາ.
- ບາງຄັ້ງກໍມີການຕໍ່ສູ້ກັບຄວາມບາບໃນຈິດໃຈຢ່າງຮຸນແຮງເພື່ອຄວບຄຸມບໍ່ໃຫ້ກະທຳສິ່ງທີ່ຜິດບາບ.
- ການກະທຳຂອງພວກເຮົາມີຜົນກະທົບຕໍ່ຕົວເຮົາເອງ ເພາະເຂົາໄປເຂົ້າຂ້າງຄົນອື່ນ.

( ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປ ແລະຮຽບຮຽງໂດຍ JH )